german cooperation
DEUTSCHE ZUSAMMENARBEIT

Implemented by

giz Deutsche Gesellschaft für Internationale Zusammenarbeit (GIZ) GmbH

MEKONG RIVER COMMISSION MRC FOR SUSTAINABLE DEVELOPMENT

# ແຜນງານການຮ່ວມມືກ່ຽວກັບນໍ້າຂ້າມຊາຍແດນໃນລຸ່ມແມ່ນໍ້າຂອງ ໄລຍະ I ແລະ II (TWC)

## ແຜນງານສະໜັບສະໜູນຄະນະກຳມາທິການແມ່ນໍ້າຂອງສາກົນກ່ຽວກັບວຽກງານສົ່ງເສີມການຮ່ວມມືລະຫວ່າງປະເທດສະມາຊິກລຸ່ມແມ່ນໍ້າຂອງ ເພື່ອປັບປຸງການຄຸ້ມຄອງນໍ້າຮ່ວມກັນ ລວມທັງການເພີ່ມຄວາມສາມາດໃນການປັບຕົວ ແລະ ການພັດທະນາແບບຍືນຍົງ.

| | |
|---|---|
| Project Title | ແຜນງານການຮ່ວມມືກ່ຽວກັບນໍ້າຂ້າມຊາຍແດນໃນລຸ່ມແມ່ນໍ້າຂອງ ໄລຍະ I ແລະ II |
| Commissioned by | ກະຊວງການຮ່ວມມືດ້ານເສດຖະກິດ ແລະ ການພັດທະນາ ແຫ່ງ ສະຫະພັນ ເຢຍລະມັນ (BMZ) |
| Project regions | ກຳປູເຈຍ, ສ.ປ.ປ ລາວ, ໄທ, ຫວຽດນາມ |
| Leading executing agency | ຄະນະກຳມາທິການແມ່ນໍ້າຂອງສາກົນ (MRC) |
| Duration | 2018 - 2024 |

### ຄວາມເປັນມາ

ຊີວິດການເປັນຢູ່ຂອງພົນລະເມືອງຂອງ ຣາຊະອານາຈັກກຳປູເຈຍ, ສ.ປ.ປ ລາວ, ຣາຊະອານາຈັກໄທ ແລະ ສ.ສ ຫວຽດນາມ ຫຼາຍກວ່າ 70 ລ້ານຄົນແມ່ນອີງໃສ່ແມ່ນໍ້າຂອງ ແລະ ບັນດາສາຂາຂອງແມ່ນໍ້າຂອງ. ອ່າງແມ່ນໍ້າຂອງມີຄວາມສຳຄັນຕໍ່ການຄໍ້າຊູຊີວິດການເປັນຢູ່ຂອງປະຊົນ, ເພາະເປັນແຫຼ່ງອາຫານ, ແຫຼ່ງຜະລິດໄຟຟ້າພະລັງງານນໍ້າ ແລະ ແຫຼ່ງສະໜອງນໍ້າປະປາ. ໂດຍທຳມະຊາດແລ້ວ, ບັນດາປະເທດລຸ່ມແມ່ນໍ້າຂອງສາມາດນຳໃຊ້ແມ່ນໍ້າຂອງ ແລະ ລະບົບນິເວດອ້ອມຂ້າງເພື່ອການດຳລົງຊີວິດ ແລະ ການພັດທະນາ. ຄວາມຕ້ອງການເພື່ອຟື້ນຟູເສດຖະກິດພາຍຫລັງການລະບາດຂອງພະຍາດໂຄວິດ 19 ແລະ ການພັດທະນາເສດຖະກິດສັງຄົມອາດນຳໄປສູ່ການຊົມໃຊ້ຊັບພະຍາກອນລຸ່ມແມ່ນໍ້າຂອງຫຼາຍເກີນໄປ, ເຊິ່ງຜົນກະທົບທີ່ເກີດຈາກກິດຈະກຳຂອງມະນຸດຕໍ່ຊັບພະຍາກອນນໍ້າໄດ້ຖືກເພີ່ມຄວາມຮຸນແຮງຈາກການປ່ຽນແປງຂອງດິນຟ້າອາກາດ. ຄະນະກຳມາທິການແມ່ນໍ້າຂອງສາກົນ, ໃນນາມເປັນເວທີການທູດໃນວຽກງານນໍ້າ, ຈຶ່ງມີບົດບາດສຳຄັນໃນການສົ່ງເສີມການນຳໃຊ້ນໍ້າເພື່ອການພັດທະນາແບບຍືນຍົງຂ້າມຊາຍແດນ. ຄວາມສົມດູນ ລະຫວ່າງຄວາມຕ້ອງການທາງດ້ານເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມສາມາດເກີດຂຶ້ນໄດ້ໂດຍການຮ່ວມມືຂອງບັນດາປະເທດທີ່ຕັ້ງຢູ່ລຸ່ມແມ່ນໍ້າຂອງ. ອີງໃສ່ປະຫວັດພາລະກິດທີ່ມີມາຂອງຄະນະກຳມະທິການແມ່ນໍ້າຂອງ ປີ 1975, ຄະນະກຳມາທິການແມ່ນໍ້າຂອງສາກົນຈຶ່ງໄດ້ຖືກສ້າງຕັ້ງຂຶ້ນໃນປີ 1995. ນັບຕັ້ງແຕ່ນັ້ນມາ, ຄະນະກຳມາທິການແມ່ນໍ້າຂອງສາກົນໄດ້ມີການປັບປຸງຕະຫຼອດມາໃນຖານະເປັນອົງການຈັດຕັ້ງສາກົນຫຼັກເພື່ອຄຸ້ມຄອງຊັບພະຍາກອນນໍ້າດັ່ງກ່າວ. ເຖິງຢ່າງໃດກໍ່ຕາມ, ໜ້າວຽກຂອງຄະນະກຳມາທິການແມ່ນໍ້າຂອງສາກົນຈຳເປັນຕ້ອງໄດ້ຮັບການປັບປຸງບໍ່ວ່າຈະເປັນລະດັບຂົງເຂດ ແລະ ລະດັບປະເທດ, ເພື່ອໃຫ້ແທດເໝາະກັບສິ່ງທ້າທາຍໃນປັດຈຸບັນ ແລະ ສິ່ງທ້າທາຍທີ່ຈະເກີດຂຶ້ນໃນຕໍ່ໜ້າຢູ່ຂົງເຂດລຸ່ມແມ່ນໍ້າຂອງ. ນີ້ໄດ້ຮຽນຮ້ອງໃຫ້ມີການສ້າງຄວາມເຂັ້ມແຂງໃຫ້ແກ່ຂະແໜງການທີ່ກ່ຽວຂ້ອງຂອງປະເທດສະມາຊິກ ແລະ ພາລະກິດປະສານງານຂອງຄະນະກຳມາທິການແມ່ນໍ້າຂອງສາກົນໃຫ້ເຂັ້ມແຂງຍິ່ງຂຶ້ນ.




*ພິທີເຊັນສັນຍາສືບຕໍ່ໂຄງການ ການວາງແຜນຮ່ວມກັນຈົນຮອດປີ 2024 ລະຫວ່າງ ຄະນະກຳມາທິການແມ່ນໍ້າຂອງສາກົນ ແລະ GIZ. ຮູບຈາກ: © GIZ/TWC*

### ຈຸດປະສົງ

ແຜນງານການຮ່ວມມືກ່ຽວກັບນໍ້າຂ້າມຊາຍແດນ ແມ່ນເນັ້ນໃສ່ສະໜັບສະໜູນຕິດຕາມກວດກາແມ່ນໍ້າ, ໃຫ້ການຊ່ວຍເຫຼືອການຈັດຕັ້ງປະຕິບັດໂຄງການຄຸ້ມຄອງອຸທົກກະໄພ ແລະ ໄພແລ້ງຂ້າມຊາຍແດນຮ່ວມກັນ ແລະ ໃຫ້ການຊ່ວຍເຫຼືອປັບປຸງການປະສານງານ ແລະ ຄວາມສາມາດໃນການຄຸ້ມຄອງຂອງຄະນະກຳມາທິການແມ່ນໍ້າຂອງສາກົນ.

### ວິທີການດຳເນີນງານ

ຄະນະກຳມາທິການແມ່ນໍ້າຂອງສາກົນແມ່ນອົງກອນລະຫວ່າງປະເທດປະຈຳຂົງເຂດທີ່ຊີ້ນຳການຮ່ວມມືລະຫວ່າງປະເທດຢູ່ຂົງເຂດລຸ່ມແມ່ນໍ້າຂອງເພື່ອປັບປຸງການຄຸ້ມຄອງນໍ້າຮ່ວມກັນ, ລວມທັງການເພີ່ມຄວາມສາມາດໃນການປັບຕົວ ແລະ ການພັດທະນາແບບຍືນຍົງ.

ແຜນງານນີ້ໃຫ້ການຊ່ວຍເຫຼືອຄະນະກຳມາທິການແມ່ນໍ້າຂອງສາກົນກ່ຽວກັບການວາງແຜນຍຸດທະສາດເພື່ອການພັດທະນາອ່າງຮັບນໍ້າຂອງຮອບດ້ານທີ່ເນັ້ນໃສ່:

- ການສ້າງເຄືອຂ່າຍຕິດຕາມກວດກາຄຸນນະພາບແມ່ນໍ້າຂອງ ເພື່ອປະເມີນການປ່ຽນແປງດ້ານສິ່ງແວດລ້ອມ, ເນື່ອງຈາກບັນດາເຂື່ອນໄຟຟ້າ ພະລັງງານນໍ້າເພີ່ມຂຶ້ນ. ຕົວຢ່າງ: ການເພີ່ມຂຶ້ນຂອງມົນລະພິດປລາສະຕິກ. ແຜນງານໄດ້ມີສ່ວນຮ່ວມໃນຈັດຝຶກອົບຮົມ, ສະໜອງອຸປະກອນທີ່ຈຳເປັນ, ລວມທັງການໃຫ້ຄຳແນະນຳ ດ້ານວິຊາການເພື່ອສ້າງວິທີການຕິດຕາມກວດກາ. ບັນດາກິດຈະກຳທີ່ກ່າວນີ້ ເຮັດໃຫ້ແຜນງານການ ຕິດຕາມກວດກາສິ່ງແວດລ້ອມຮ່ວມຂອງເຂື່ອນໄຟຟ້າພະລັງງານນໍ້າ ແລະ ແຜນຍຸດທະສາດພັດທະນາຂີດຄວາມສາມາດຕ່າງໆໄດ້ຮັບການຮັບຮອງ.

- ການວາງແຜນຮ່ວມກັນຂອງຄະນະກຳມາທິການແມ່ນ້ຳຂອງສາກົນ ທີ່ເປັນວິທີຄຸ້ມຄອງນ້ຳຂ້າມຊາຍແດນ ເພື່ອຫລຸດຜ່ອນຄວາມສ່ຽງທາງອຸທົກກະໄພ ແລະ ໄພແລ້ງ. ວິທີດັ່ງກ່າວໄດ້ຮັບການຊ່ວຍເຫລືອຜ່ານ ການສ້າງລະບົບເຕືອນໄພລ່ວງໜ້າ, ການກຳນົດວິທີແກ້ໄຂເພື່ອການປັບຕົວໃຫ້ເຂົ້າກັບການປ່ຽນແປງຂອງດິນຟ້າອາກາດ ແລະ ການຈັດຕັ້ງປະຕິບັດວິທີການແກ້ໄຂທີ່ຮຽນແບບທຳມະຊາດ. ແຜນງານນີ້ຍັງໄດ້ເຮັດວຽກຮ່ວມມືຢ່າງໃກ້ຊິດກັບຄະນະກຳມາທິການແມ່ນ້ຳຂອງສາກົນ ເພື່ອສ້າງລະບົບແຜນທີອອນໄລ ແລະ ແຜນແມ່ບົດຮ່ວມຂອງຂົງເຂດອ່າງຮັບນ້ຳຍ່ອຍ ແລະ ເພື່ອຈັດລຳດັບວຽກງານບູລິມະສິດການລົງທຶນທີ່ເນັ້ນໃສ່ແກ້ໄຂ ແລະ ກໍ່ສ້າງແບບຍືນຍົງ.

- ຊຸກຍູ້ການປັບປຸງລະບົບຄຸ້ມຄອງພາຍໃນຂອງກອງເລຂາຄະນະກຳມາ ທິການນ້ຳຂອງສາກົນ ດ້ວຍການສະໜັບສະໜູນການຈັດຕັ້ງປະຕິບັດແຜນຍຸດທະສາດຂອງຄະນະກຳມາທິການແມ່ນ້ຳຂອງສາກົນ 2021-2025, ເຊິ່ງລວມທັງການໃຫ້ຄຳແນະນຳດ້ານວິຊາການກ່ຽວກັບກົນໄກການຈັດຕັ້ງປະຕິບັດໃຫ້ສອດຄ່ອງຕາມລະບຽບຂໍ້ກຳນົດຕ່າງໆ. ຕົວຢ່າງ, ການຄຸ້ມຄອງການເງິນພາຍໃນ ແລະ ການນຳໃຊ້ທຶນຮອນຈາກຄູ່ຮ່ວມສັນຍາສອງຝ່າຍ, ຜູ້ໃຫ້ທຶນສາກົນ ແລະ ທຶນສົມທົບຈາກບັນດາປະເທດສະມາຊິກໃຫ້ມີປະສິດທິພາບ.

## ສິ່ງທີ່ພວກເຮົາບັນລຸ

ໂດຍການສະໜັບສະໜູນຂອງສະຫະພັນສາທາລະນະລັດເຢຍລະມັນ, ຄະນະກຳມາທິການແມ່ນ້ຳຂອງສາກົນໄດ້ປະກອບສ່ວນເຂົ້າໃນການປັບປຸງຄວາມຮູ້ດ້ານຊັບພະຍາກອນນ້ຳຂອງປະເທດສະມາຊິກ, ຊ່ວຍສ້າງວິໄສທັດຮ່ວມ ແລະ ປັບປຸງກົນໄກການຮ່ວມມືຂອງປະເທດສະມາຊິກ. ການມີສ່ວນຮ່ວມແບບນີ້ ເຮັດໃຫ້ຄະນະກຳມາທິການແມ່ນ້ຳຂອງສາກົນກາຍເປັນອົງກອນທີ່ມີປະສິດ ທິພາບ ແລະ ກ້າວຂຶ້ນໄປເປັນອົງກອນແຖວໜ້າຂອງໂລກທາງດ້ານການຮ່ວມມືກ່ຽວກັບນ້ຳຂ້າມຊາຍແດນ ທີ່ໄດ້ຮັບການສະໜັບສະໜູນຈາກທັງທາງພາກລັດ ແລະ ພາກເອກະຊົນທາງດ້ານທຶນຮອນ ນັບມື້ນັບຫຼາຍຂຶ້ນ.

ມາເຖິງປັດຈຸບັນ, ແຜນງານໄດ້ຮັບຜົນສຳເລັດ ແລະ ມີຄວາມຄືບໜ້າດັ່ງນີ້:

- ຜົນໄດ້ຮັບຂອງໂຄງການຕົວແບບຈາກແຜນງານຕິດຕາມກວດກາສິ່ງແວດລ້ອມແບບຮ່ວມເຊື່ອມສານເຂົ້າໃນເຄືອຂ່າຍຕິດຕາມກວດກາແມ່ນ້ຳສາຍຫຼັກຂອງຄະນະກຳມາທິການແມ່ນ້ຳຂອງສາກົນ, ເຊິ່ງລວມເອົາທັງແມ່ນ້ຳຂອງ ແລະ ແມ່ນ້ຳທີ່ເປັນສາຂາຫຼັກ, ລວມທັງການຕິດຕາມກວດກາສະພາບເສດຖະກິດ-ສັງຄົມ, ພ້ອມທັງຊ່ວຍກະ ຈາຍສິ່ງຕໍ່ໜ້າທີ່ຮັບຜິດຊອບຫຼັກໃຫ້ບັນດາປະເທດສະມາຊິກ.
- ໄດ້ມີການຈັດຊື້ຊຸດອຸປະກອນໃນການຕິດຕາມກວດກາຄຸນນະພາບນ້ຳເພື່ອນຳໃຊ້ເຂົ້າໃນວຽກງານເຄືອຂ່າຍການຕິດຕາມກວດກາຄຸນນະພາບນ້ຳຂອງແມ່ນ້ຳສາຍຫຼັກຂອງຄະນະກຳມາທິການແມ່ນ້ຳຂອງສາກົນ ລວມທັງໝົດ 7 ຊຸດ.
- ໄດ້ສ້າງລະບົບແຜນທີ່ອອນໄລຂອງອ່າງຮັບນ້ຳຍ່ອຍຂຶ້ນ ແລະ ນຳໃຊ້ເປັນລະບົບເຕືອນໄພລ່ວງໜ້າ.
- ໄດ້ສ້າງສຳເລັດລະບົບແຜນທີ່ອອນໄລຂອງອ່າງຮັບນ້ຳຍ່ອຍຮ່ວມຂອງຣາຊະອານາຈັກກຳປູເຈຍ ແລະ ຣາຊະອານາຈັກໄທ ແລະ ໄດ້ແປລະບົບເປັນສອງພາສາ, ຄືພາສາກຳປູເຈຍ ແລະ ພາສາໄທ.
- ສົ່ງເສີມໃຫ້ນຳໃຊ້ລະບົບການຕິດຕາມກວດກາ ແລະ ປະເມີນຜົນຂອງຄະນະກຳມາທິການແມ່ນຂອງສາກົນເພື່ອລາຍງານ, ຂຶ້ນງົບປະມານ ແລະ ວາງແຜນ.

## ບົດບາດຍິງ-ຊາຍ ແລະ ການຄຸ້ມຄອງຊັບພະຍາກອນນ້ຳ

ຍຸດທະສາດສົ່ງເສີມບົດບາດຍິງ-ຊາຍເພື່ອນຳໃຊ້ເຂົ້າໃນວຽກງານຕິດຕາມກວດກາແມ່ນ້ຳສາຍຫຼັກກຳລັງຢູ່ໃນຂັ້ນຕອນການສ້າງ ແລະ ຄາດວ່າຈະສາມາດນຳໃຊ້ຍຸດທະສາດດັ່ງກ່າວພາຍໃນປີ 2023. ແຜນງານນີ້ຍັງໄດ້ສະໜັບສະໜູນການປະເມີນຜົນກະທົບຕໍ່ປະຊາກອນແຕ່ລະເພດ ແລະ ຄວາມລະອຽດອ່ອນຂອງພວກເຂົາຢູ່ໃນຂົງເຂດອ່າງຍ່ອຍ ລວມທັງ ຊ່ວຍໃນການຈັດຕັ້ງປະຕິບັດແຜນດຳເນີນງານບົດບາດ ຍິງ-ຊາຍ ຂອງຄະນະກຳມາທິການແມ່ນ້ຳຂອງສາກົນ.




*ສະເໜີວິທີການແກ້ໄຂທີ່ຮຽນແບບທຳມະຊາດ ເພື່ອແກ້ໄຂອຸທົກກະໄພ ແລະ ໄພແລ້ງຂ້າມແດນລະຫວ່າງ ເມືອງ ອາລັນຍາປະເທດ ແລະ ພອຍເພັດ. ຮູບຈາກ: © GIZ/TWC*

### ກ່ຽວກັບ GIZ ລາວ

GIZ, ໃນນາມເປັນສ່ວນໜຶ່ງຂອງການຮ່ວມມື ເຢຍລະມັນ ເພື່ອການພັດທະນາ, ໄດ້ເຄື່ອນໄຫວວຽກງານຢູ່ ສປປ ລາວ ແຕ່ປີ 1993 ຕາງໜ້າໃຫ້ກະຊວງການຮ່ວມມືດ້ານເສດຖະກິດ ແລະ ການພັດທະນາ ແຫ່ງ ສະຫະພັນເຢຍລະມັນ (BMZ) ພ້ອມກັບບັນດາຜູ້ໃຫ້ທຶນ ແລະ ຄູ່ຮ່ວມພັດທະນາ. ໃນປັດຈຸບັນ, GIZ ກຳລັງສະໜັບສະໜູນບັນດາໂຄງການໃນ 3 ຂົງເຂດບູລິມະສິດຄື: ກ) ການພັດທະນາຊົນນະບົດ, ຂ) ການອະນຸລັກຮັກສາທຳມະຊາດ ແລະ ຊັບພະຍາກອນທຳມະຊາດ ແລະ ຄ) ການພັດທະນາເສດຖະກິດແບບຍືນຍົງ.

ສຳລັບຂໍ້ມູນເພີ່ມຕື່ມ, ກະລຸນາເຂົ້າເບິ່ງທີ່ເວັບໄຊ www.giz.de/laos.

| | |
|---|---|
| ຈັດພິມໂດຍ | Deutsche Gesellschaft für<br>Internationale Zusammenarbeit (GIZ) GmbH<br><br>ສຳນັກງານຂຶ້ນທະບຽນ ບອນ ແລະ ເອຈ໌ບອນ, ປະເທດເຢຍລະມັນ<br><br>ແຜນງານການຮ່ວມມືກ່ຽວກັບນ້ຳຂ້າມຊາຍແດນໃນລຸ່ມແມ່ນ້ຳຂອງໄລຍະ I ແລະ II<br><br>ອາຄານ ຄະນະກຳມາທິການແມ່ນ້ຳຂອງສາກົນ (MRC), ຕູ້ ປ. ນ. 01010,<br>ຖະໜົນ ດົງນາໂຊກ-ໜອງບຶກ., ເມືອງ ສີໂຄດຕະບອງ, ນະຄອນຫລວງວຽງຈັນ, ສປປ ລາວ<br><br>ເວັບໄຊ: www.giz.de/laos (EN); www.giz.de/laos-la (LA) |
| ລົງວັນທີ | ທັນວາ 2023 |
| ອອກແບບໂດຍ | ຫນ່ວຍງານຂໍ້ມູນຂ່າວສານ, ຫ້ອງການ GIZ ປະຈຳ ສປປ ລາວ, ນະຄອນຫລວງວຽງຈັນ |
| ຮູບຖ່າຍໂດຍ | GIZ/TWC |
| ຮຽບຮຽງໂດຍ | ທ່ານ ເບັນຈາມິນ ໂຮດິກ |
| ຕິດຕໍ່ | ທ່ານ ເບັນຈາມິນ ໂຮດິກ<br>(benjamin.hodick@giz.de)<br><br>ຫ້ອງການ GIZ ຈະເປັນຜູ້ຮັບຜິດຊອບຕໍ່ເນື້ອໃນສິ່ງພິມດັ່ງກ່າວ. |
| ຕາງໜ້າໃຫ້ | ກະຊວງການຮ່ວມມືດ້ານເສດຖະກິດ ແລະ ການພັດທະນາ ແຫ່ງ ສະຫະພັນ ເຢຍລະມັນ (BMZ) |
| ລິ້ງທີ່ສຳຄັນອື່ນໆ | https://www.mrcmekong.org/ |